**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 0285 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 20 ກຸມພາ 2025

# ຂໍ້ຕົກລົງ
# ວ່າດ້ວຍເນື້ອໃນການໂຄສະນາສິນຄ້າ

- ອີງຕາມ ກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມ ດໍາລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ໜັງສືສະເໜີຂອງກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ສະບັບເລກທີ 500/ກຂກຄ, ລົງວັນທີ 27 ທັນວາ 2024.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ ແລະ ລະບຽບການ ກ່ຽວກັບວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ເພື່ອເຮັດໃຫ້ການໂຄສະນາສິນຄ້າ ມີຄວາມຊັດເຈນ ແລະ ຖືກຕ້ອງກັບຄວາມເປັນຈິງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ຊົມໃຊ້ ແນໃສ່ເຮັດໃຫ້ສັງຄົມມີຄວາມຍຸຕິທໍາ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ເນື້ອໃນການໂຄສະນາສິນຄ້າ**

ເນື້ອໃນການໂຄສະນາສິນຄ້າ ແມ່ນຢັ້ງຢືນເນື້ອໃນຂອງການໂຄສະນາສິນຄ້າ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ ທີ່ມີຂໍ້ມູນຂ່າວສານຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນຕາມຄວາມເປັນຈິງ ກ່ຽວກັບປະເພດ, ຊະນິດ, ຄຸນລັກສະນະ, ຄຸນນະພາບຂອງສິນຄ້າ, ເຄື່ອງໝາຍການຄ້າ, ບໍ່ໂຄສະນາເກີນຄວາມເປັນຈິງ, ຮັບປະກັນການໂຄສະນາບໍ່ໃຫ້ມີລັກສະນະສຽດສີ ແລະ ໝິ່ນປະໝາດສິນຄ້າຂອງຄູ່ແຂ່ງ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິນຄ້າ** ໝາຍເຖິງ ວັດຖຸສິ່ງຂອງ ທີ່ໃຊ້ໃນການອຸປະໂພກ ຫຼື ບໍລິໂພກ ລວມທັງເອກະສານສະແດງສິດໃນວັດຖຸສິ່ງຂອງ;
2. **ການໂຄສະນາທາງກວ້າງ** ໝາຍເຖິງ ການໂຄສະນາຜ່ານປ້າຍໂຄສະນາປະເພດຕ່າງໆ ຕາມສະຖານທີ່ສາທາລະນະ, ການເປີດຕົວສິນຄ້າ ແລະ ການບໍລິການໃໝ່;

3. **ການໂຄສະນາຜ່ານພາຫະນະສື່ມວນຊົນ** ໝາຍເຖິງ ສື່ສິ່ງພິມ, ສື່ເອເລັກໂຕຣນິກ ລວມທັງຜະລິດຕະພັນສື່ມວນຊົນ ເຊັ່ນ: ໜັງສືພິມ, ວາລະສານ, ລາຍການວິທະຍຸ, ໂທລະພາບ, ອິນເຕີເນັດ, ເວັບໄຊ ແລະ ອື່ນໆ;

4. **ສື່ແບບໃໝ່** ໝາຍເຖິງ ພາຫະນະໂຄສະນາປະເພດໜຶ່ງຂອງສື່ເອເລັກໂຕຣນິກ ທີ່ສາມາດສື່ສານໄດ້ສອງລວງດ້ວຍການນຳໃຊ້ ເຕັກໂນໂລຊີ ສື່ສານທັນສະໄໝ ໃນການສົ່ງຂໍ້ມູນຂ່າວສານ ເປັນຕົວອັກສອນ, ພາບ ແລະ ສຽງ ຜ່ານເຄືອຂ່າຍອິນເຕີເນັດເຊັ່ນ: ເຟສບຸກ, ຢູທູບ, ທະວິດເຕີ້, ຕິກຕ໊ອກ ແລະ ອື່ນໆ;

5. **ຜູ້ຊົມໃຊ້** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ ແລະ ນຳໃຊ້ສິນຄ້າ ໂດຍບໍ່ມີຈຸດປະສົງທາງການຄ້າ.

### ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໂຄສະນາສິນຄ້າ ຜ່ານສື່ໂຄສະນາສິນຄ້າ ໃນຮູບແບບຕ່າງໆ ຢູ່ ສປປ ລາວ.

ຂໍ້ຕົກລົງສະບັບນີ້ ຢັ້ງຢືນເນື້ອໃນການໂຄສະນາສິນຄ້າອຸປະໂພກ, ບໍລິໂພກ ຕາມລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດຂອງ ສປປ ລາວ LSIC ລະຫັດ 45, 46 ແລະ 47.

ຂໍ້ຕົກລົງສະບັບນີ້ ບໍ່ກວມເອົາການໂຄສະນາ ສິນຄ້າປະເພດອາຫານ, ຢາ ແລະ ຜະລິດຕະພັນການແພດທີ່ຂະແໜງການສາທາລະນະສຸກ ເປັນຜູ້ຄຸ້ມຄອງ.

## ໝວດທີ 2
## ຮູບການ ແລະ ການສະເໜີຂໍຢັ້ງຢືນເນື້ອໃນການໂຄສະນາສິນຄ້າ

### ມາດຕາ 5 ຮູບການໂຄສະນາສິນຄ້າ

ການໂຄສະນາສິນຄ້າ ມີ ສອງ ຮູບການ ຄື:

1. ການໂຄສະນາທາງກວ້າງ;
2. ການໂຄສະນາຜ່ານພາຫະນະສື່ມວນຊົນ.

### ມາດຕາ 6 ການສະເໜີຂໍຢັ້ງຢືນເນື້ອໃນການໂຄສະນາສິນຄ້າ

ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງຂໍຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຕ້ອງຍື່ນໜັງສືສະເໜີ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຕາມແບບພິມຂອງກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;
2. ໜັງສືຢັ້ງຢືນເນື້ອໃນສະຫຼາກສິນຄ້າເປັນພາສາລາວ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ຍົກເວັ້ນບາງສິນຄ້າ ທີ່ບໍ່ຈຳເປັນຕ້ອງຕິດສະຫຼາກສິນຄ້າເປັນພາສາລາວ ຕາມລະບຽບການ;
3. ລາຍລະອຽດເນື້ອໃນການໂຄສະນາສິນຄ້າ ທີ່ຈະນຳໄປໂຄສະນາ;
4. ເອກະສານ ຮູບພາບ ຫຼື ຕົວຢ່າງສິນຄ້າ ທີ່ຈະໂຄສະນາ.

### ມາດຕາ 7 ການພິຈາລະນາ ຢັ້ງຢືນເນື້ອໃນການໂຄສະນາສິນຄ້າ

ພາຍຫຼັງທີ່ໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງຄົ້ນຄວ້າກວດກາເນື້ອໃນການໂຄສະນາສິນຄ້າ ທີ່ຈະນຳໄປໂຄສະນາ, ຖ້າເຫັນວ່າເນື້ອໃນການໂຄສະນາສິນຄ້າຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນຕາມຄວາມເປັນຈິງ ຕ້ອງອອກໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນຮັບເອກະສານເປັນຕົ້ນໄປ.

ກໍລະນີ ເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນໜັງສືສະເໜີຊາບ ພາຍໃນ ສາມ ວັນລັດຖະການ ເພື່ອປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຍື່ນໜັງສືສະເໜີຊາບ ພາຍໃນ ຫ້າ ວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 8 ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ**

ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ແມ່ນເອກະສານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ທີ່ຖືກຕ້ອງ, ຊັດເຈນ ແລະ ຄົບຖ້ວນຕາມຄວາມເປັນຈິງ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ອອກໃຫ້ຄັ້ງດຽວສາມາດນຳໃຊ້ໄດ້ຕະຫຼອດໄປ.

ກໍລະນີ ທີ່ມີຈຸດປະສົງຂໍປ່ຽນແປງເນື້ອໃນການໂຄສະນາສິນຄ້າ ຕ້ອງໄດ້ປະກອບເອກະສານຄືນໃໝ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ພ້ອມດ້ວຍໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ສະບັບຕົ້ນ.

**ມາດຕາ 9 ການໂຈະໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ**

ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ໂຄສະນາ ຫຼື ສະໜອງຂໍ້ມູນຂ່າວສານ ກ່ຽວກັບສິນຄ້າເກີນຄວາມຈິງ ທີ່ບໍ່ຖືກຕ້ອງຕາມການຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
2. ປ່ຽນແປງເນື້ອໃນການໂຄສະນາສິນຄ້າ ໂດຍບໍ່ຮັບອະນຸຍາດ;
3. ໂຄສະນາສິນຄ້າອື່ນ ທີ່ບໍ່ແມ່ນສິນຄ້າ ທີ່ໄດ້ຮັບໃບຢັ້ງຢືນເນື້ອໃນໂຄສະນາສິນຄ້າ.

ພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນໃຫ້ໂຈະ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ, ຜູ້ດຳເນີນທຸລະກິດຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນ ສາມ ເດືອນ.

**ມາດຕາ 10 ການຍົກເລີກ ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ**

ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຜູ້ໂຄສະນາສິນຄ້າຂໍຢຸດເຊົາ;
2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍໃນ ສາມ ເດືອນ ພາຍຫຼັງທີ່ຖືກສັ່ງໂຈະ ຫຼື ຍັງສືບຕໍ່ເຄື່ອນໄຫວໂຄສະນາສິນຄ້າ ໃນເວລາທີ່ຖືກສັ່ງໂຈະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;
3. ມີມູນຄວາມຈິງທີ່ພິສູດໄດ້ເຖິງຄວາມເສຍຫາຍ ຕໍ່ຊີວິດ ແລະ ຊັບສິນ ຈາກພາກສ່ວນທີ່ກ່ຽວຂ້ອງກ່ຽວກັບຜູ້ຊົມໃຊ້ ໄດ້ຮັບຜົນກະທົບຈາກການຊົມໃຊ້ສິນຄ້າ ທີ່ໂຄສະນາ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 11 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ກີດໜ່ວງຖ່ວງດຶງ ແລະ ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້;
2. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດກົດໝາຍ ແລະ ລະບຽບການ;
3. ເປັນສື່ກາງ ຫຼື ໃຫ້ສິນບົນ ເພື່ອຜົນປະໂຫຍດໃນວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
4. ໂຄສະນາ ຫຼື ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ປອມແປງເອກະສານ ແລະ ນຳໃຊ້ເອກະສານປອມແປງ;
6. ໂຄສະນາສິນຄ້າ ທີ່ບໍ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 12 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ໂຄສະນາ ຫຼື ສະໜອງຂໍ້ມູນຂ່າວສານ ກ່ຽວກັບສິນຄ້າເກີນຄວາມຈິງ ທີ່ບໍ່ຖືກຕ້ອງຕາມການຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
2. ໂຄສະນາສິນຄ້າອື່ນ ໂດຍບໍ່ໄດ້ຮັບການຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ;
3. ປ່ຽນແປງເນື້ອໃນການໂຄສະນາສິນຄ້າ ໂດຍບໍ່ຮັບອະນຸຍາດ;
4. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເປີດເຜີຍຄວາມລັບ, ທຳລາຍ, ສັບປ່ຽນເອກະສານ, ຫຼັກຖານ ຫຼື ຂອງກາງ ກ່ຽວກັບການໂຄສະນາສິນຄ້າ;
5. ຂັດຂວາງ, ບໍ່ໃຫ້ຄວາມຮ່ວມມື ແລະ ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ ຕໍ່ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການລົງຕິດຕາມ, ກວດກາ ກ່ຽວກັບວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
6. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ຫຼື ພະນັກງານ ທີ່ຮັບຜິດຊອບວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
7. ໂຄສະນາສິນຄ້າ ທີ່ບໍ່ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 13 ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ມີພຶດຕິກຳດັ່ງນີ້:

1. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທຳ ແລະ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ກົດໜ່ວງຖ່ວງດຶງ, ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ບຸກຄົນອື່ນທີ່ກ່ຽວຂ້ອງກັບການໂຄສະນາສິນຄ້າ;
3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ, ປະລະໜ້າທີ່ໂດຍບໍ່ມີຄວາມຮັບຜິດຊອບ, ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ ຫຼື ລຳອຽງຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;
4. ທວງເອົາ, ຂໍເອົາ ຫຼື ຮັບສິນບົນ, ສົມຮູ້ຮ່ວມຄິດ ຫຼື ມີພຶດຕິກຳອື່ນທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ພັກພວກຂອງຕົນ;
5. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ, ເປີດເຜີຍຄວາມລັບ, ກົດໜ່ວງຖ່ວງດຶງ ຫຼື ທຳລາຍ, ສັບປ່ຽນເອກະສານ, ຫຼັກຖານ ຫຼື ຂອງກາງ ກ່ຽວກັບການໂຄສະນາສິນຄ້າ ທີ່ບໍ່ສອດຄ່ອງກັບການຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;
6. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການຈັດຕັ້ງປະຕິບັດວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ

**ມາດຕາ 14 ການຈັດຕັ້ງປະຕິບັດວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ**

ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນເນື້ອໃນໂຄສະນາສິນຄ້າ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ແບ່ງອອກເປັນ ສາມ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ;
2. ຂັ້ນແຂວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 15 ສິດ ແລະ ໜ້າທີ່ ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ**

ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ, ປັບປຸງນິຕິກຳ ແລະ ລະບຽບການ ກ່ຽວກັບວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ແລະ ນຳໃຊ້ມາດຕະການປົກປ້ອງຜູ້ຊົມໃຊ້ ກ່ຽວກັບວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ໃນຂອບເຂດທົ່ວປະເທດ;

3. ຈັດຝຶກອົບຮົມ, ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ໃນຂອບເຂດທົ່ວປະເທດ;

4. ພິຈາລະນາ ອອກ, ປ່ຽນແປງເນື້ອໃນ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;

5. ຕິດຕາມ ກວດກາ ເນື້ອໃນ ແລະ ຮູບແບບການໂຄສະນາສິນຄ້າຂອງບຸກຄົນ, ນິຕິບຸກຄົນ ທີ່ເຫັນວ່າບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເກີນຄວາມເປັນຈິງ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳຮ້ອງ ຫຼື ຄຳສະເໜີຂອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບຈາກການໂຄສະນາສິນຄ້າ;

7. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 16 ສິດ ແລະ ໜ້າທີ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ແລະ ນຳໃຊ້ມາດຕະການປົກປ້ອງຜູ້ຊົມໃຊ້ ກ່ຽວກັບວຽກງານໂຄສະນາສິນຄ້າ ໃນຂອບເຂດແຂວງ, ນະຄອນຫຼວງ;

2. ຈັດຝຶກອົບຮົມ, ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ປົກປ້ອງຜູ້ຊົມໃຊ້ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ພິຈາລະນາ ອອກ, ປ່ຽນແປງເນື້ອໃນ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;

4. ຕິດຕາມ, ກວດກາ ເນື້ອໃນ ແລະ ຮູບແບບການໂຄສະນາສິນຄ້າ ຂອງບຸກຄົນ, ນິຕິບຸກຄົນ ທີ່ເຫັນວ່າບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເກີນຄວາມເປັນຈິງ;

5. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃນການອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານປົກປ້ອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບຈາກການໂຄສະນາສິນຄ້າ ໃນຄວາມຮັບຜິດຊອບຂອງຕົນ;

6. ຮັບ ແລະ ພິຈາລະນາແກ້ໄຂຄຳຮ້ອງ ຫຼື ຄຳສະເໜີຂອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບຈາກການໂຄສະນາສິນຄ້າ;

7. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຕໍ່ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ແນະນຳ ແລະ ນຳໃຊ້ມາດຕະການປົກປ້ອງຜູ້ຊົມໃຊ້ ກ່ຽວກັບວຽກງານການຄ້າສະນາສິນຄ້າ ໃນຂອບເຂດເມືອງ, ນະຄອນ;

2. ພິຈາລະນາ ອອກ, ປ່ຽນແປງເນື້ອໃນ, ໂຈະ ຫຼື ຍົກເລີກ ໃບຢັ້ງຢືນເນື້ອໃນການໂຄສະນາສິນຄ້າ;

3. ຕິດຕາມ ກວດກາ ເນື້ອໃນ ແລະ ຮູບແບບການໂຄສະນາສິນຄ້າ ຂອງບຸກຄົນ, ນິຕິບຸກຄົນ ທີ່ເຫັນວ່າບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເກີນຄວາມເປັນຈິງ;

4. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃນການອໍານວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານປົກປ້ອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບຈາກການໂຄສະນາສິນຄ້າ ໃນຄວາມຮັບຜິດຊອບຂອງຕົນ;

5. ຮັບ ແລະ ພິຈາລະນາແກ້ໄຂຄໍາຮ້ອງ ຫຼື ຄໍາສະເໜີຂອງຜູ້ຊົມໃຊ້ ທີ່ໄດ້ຮັບຜົນກະທົບຈາກການໂຄສະນາສິນຄ້າ;

6. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຢັ້ງຢືນເນື້ອໃນການໂຄສະນາສິນຄ້າ ຕໍ່ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມແຂ່ງຂັນທາງທຸລະກິດ ແລະ ກວດກາການຄ້າ ເປັນເຈົ້າການປະສານສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ລັດຖະມົນຕີ

ມະໄລທອງ ກົມມະສິດ